ບົດຮຽນທີ 6 ສຳລັບສະບາໂຕທີ 8 ພະຈິກ 2025



# ສັດຕູຈາກພາຍໃນ









“ເຮົາຄືພຣະເຈົ້າຢາເວ
ຄົ້ນເບິ່ງແນວຄິດຂອງຄົນ
ແລະ ທົດສອບເບິ່ງໃຈ
ມະນຸດທັງຫລາຍດ້ວຍ.
ເຮົາເຮັດຕໍ່ແຕ່ລະຄົນ
ຕາມວິທີທີ່ພວກເຂົາໃຊ້
ຊີວິດ ຄືຕາມສິ່ງທີ່ພວກ
ເຂົາປະພຶດ ແລະ ກະ
ທຳ”

ຢຣມຢ 17:10

ຫລັງຈາກກົນລະຍຸດຂອງສົງຄາມທີ່ເບິ່ງຄືບໍ່ໜ້າຈະເປັນໄປໄດ້, ກຳແພງເມືອງເຢຣີໂກໄດ້ພັງລົງ. ຊາວອິດສະຣາເອນຈຶ່ງໄດ້ບຸກເຂົ້າໂຈມຕີເມືອງ ແລະ ທຳລາຍລ້າງຈົນລຽບເປັນໜ້າກອງ.ໄຊຊະນະ!ເປັນຂອງໃຜ?ເປັນຂອງພຣະເຈົ້າ, ເພາະຊາວອິດສະຣາເອນໄດ້ປະກອບສ່ວນໃນສົງຄາມພຽງເລັກນ້ອຍ

ຕໍ່ມາຊາວອິດສະຣາເອນໄດ້ເກີດຄວາມພ່າຍແພ້ຈາກຊາວອາອີ, ເປັນຫຍັງພວກເຂົາຈຶ່ງພ່າຍແພ້? ຍ້ອນພວກເຂົາໄດ້ລະເມີດ ໂດຍການເອົາສິ່ງຂອງທີ່ຕ້ອງຖວາຍນັ້ນເປັນຂອງຕົນເອງ ຈຶ່ງເຮັດໃຫ້ພຣະເຈົ້າຈຶ່ງບໍ່ໄດ້ຊ່ວຍພວເຂົາ

ເມື່ອພວກເຂົາຕັ້ງຄຳຖາມກັບພຣະເຈົ້າ, ກໍ່ໄດ້ຄຳຕອບວ່າ: ຍ້ອນອິດສະຣາເອນໄດ້ເຮັດບາບ ພວກເຂົາຈຶ່ງບໍ່ສາມາດເອົາຊະນະສັດຕູໄດ້ອີກຕໍ່ໄປ, ແລ້ວ ອິດສະຣາເອນຈະສາມາດໄດ້ຮັບຄວາມພໍພຣະໄທຈາກພຣະເຈົ້າໄດ້ແນວໃດ?







- ສາເຫດຂອງຄວາມພ່າຍແພ້ (ຢຊ 7:1-5, 10-13)
- ຄວາມຜິດຫວັງ ແລະ ຄວາມທຸກໃຈ(ຢຊ 7:6-9)
- ການເປີດເຜີຍຜູ້ທີ່ລ່ວງລະເມີດ (ຢຊ 7:14-19)
- ບາບຂອງ ທ.ອາການ (ຢຊ 7:20-26)
- ໄດ້ຮັບໄຊຊະນະອີກຄັ້ງ (ຢຊ 8:1-29)

# ສາເຫດຂອງຄວາມພ່າຍແພ້

“ຊາດອິດສະຣາເອນໄດ້ເຮັດບາບ ພວກເຂົາໄດ້ລະເມີດພັນທະສັນຍາ ທີ່ເຮົາໄດ້ສັ່ງພວກເຂົາໃຫ້ຖືຮັກສາ. ພວກເຂົາໄດ້ເອົາບາງສິ່ງບາງຢ່າງທີ່ຕ້ອງຖືກທຳລາຍນັ້ນ. ພວກເຂົາໄດ້ລັກເອົາມາແລະອຳໄວ້ ແລ້ວເອົາສິ່ງເຫລົ່ານີ້ລວມເຂົ້າກັບສິ່ງຂອງຂອງຕົນເອງ” (ຢຊ 7:11)



ຫລັງຈາກໄດ້ຮັບລາຍງານອັນເປັນໜ້າພໍໃຈຈາກສາຍລັບທີ່ຖືກສົ່ງມາທີ່ເມືອງເຢຣິໂກ, ໂຢຊວຍໄດ້ຂໍຄຳປຶກສາຈາກພຣະເຈົ້າ ແລະໄດ້ຮັບແຜນການໃນການເຂົ້າຍຶດຄອງເມືອງຈາກພຣະອົງ.

ຖ້າວ່າໂຢຊວຍໄດ້ເຮັດແບບດຽວກັນພາຍຫລັງທີ່ໄດ້ຮັບລາຍງານຈາກສາຍລັບທີ່ຖືກສົ່ງໄປທີ່ເມືອງ ອາອີ, ຜູ້ຄົນຈຳນວນ 36 ຄົນຄົງຈະບໍ່ຕ້ອງຖືກຂ້າຕາຍ. (ຢຊ 7:1-5).

ແຕ່ແມ່ນຫຍັງແມ່ນເຫດຜົນທີ່ແທ້ຈິງທີ່ເຮັດໃຫ້ພວກເຂົາພ່າຍແພ້ສົງຄາມ, ຫລື ແມ່ນຫຍັງແມ່ນເຫດຜົນທີ່ແທ້ຈິງຂອງພຣະເຈົ້າທີ່ບອກວ່າ ຢ່າສູ້ໂຈມຕີເມືອ ອາອີ? (ຢຊ. 7:11)



ພຣະອົງຊົງເຫັນວ່າ “ອິດສະຣາເອນໄດ້ເຮັດບາບ.” ໃນພຣະຄຳພີບໍ່ມີບ່ອນໃດເລີຍທີ່ກ່າວເຖິງບາບໃນລັກສະນະນີ້: “ພວກເຂົາໄດ້ລະເມີດ... ພວກເຂົາໄດ້ເອົາ... ພວກເຂົາໄດ້ລັກ... ພວກເຂົາໄດ້ຕົວະ... ພວກເຂົາໄດ້ລັກເອົາມາເຊື່ອງໄວ້ເປັນຊັບສົມບັດຂອງຕົນເອງ.”

ສັງເກດຄຳທີ່ພຣະເຈົ້າໃຊ້. ຄວາມບາບໄດ້ກະທຳໂດຍພຽງແຕ່ຄົນດຽວ, ແຕ່ພຣະເຈົ້າຊົງເຮັດໃຫ້ທຸກໆຄົນຕ້ອງໄດ້ຮັບຜິດຊອບ. ພວກເຂົາໄດ້ລະເມີດພັນທະສັນຍາ; ຄວາມບາບນັ້ນຈະຕ້ອງໄດ້ຮັບການກຳຈັດ ກ່ອນທີ່ຈະໄດ້ຮັບການຟື້ນຟູໃໝ່



# ຄວາມຜິດຫວັງ ແລະ ຄວາມທຸກໃຈ

“ແລ້ວໂຢຊວຍກໍກ່າວວ່າ: ຂ້າແດ່ພຣະເຈົ້າຢາເວ ອົງພຣະຜູ້ເປັນເຈົ້າເອີຍ ດ້ວຍເຫດໃດພຣະອົງຈຶ່ງໄດ້ນຳພວກຂ້ານ້ອຍຂ້າມແມ່ນ້ຳຈໍແດນມາທີ່ນີ້? ກໍເພື່ອມອບພວກຂ້ານ້ອຍໃຫ້ແກ່ຊາວອາໂມຊັ້ນບໍ? ເປັນຫຍັງຈຶ່ງບໍ່ໃຫ້ພວກຂ້ານ້ອຍ ຢູ່ຟາກແມ່ນ້ຳຈໍແດນເບື້ອງນັ້ນພຸ້ນ’ ” (ຢຊ 7:7)





ໂຢຊວຍແລະພວກຜູ້ປົກຄອງໄດ້ຜິດຫວັງກັບຄວາມພ່າຍແພ້ຈາກເມືອງອາອີ, ແລະພວກເຂົາໄດ້ສະແດງອາການໂສກເສົ້າຢ່າງຊັດເຈນ (ຢຊ. 7:6).

ແລ້ວໂຢຊວຍກໍ່ໄດ້ສະແດງອາການທີ່ໝົດຫວັງແລະທໍ້ໃຈ ແບບດຽວກັນກັບທີ່ຊາວອິດສະຣາເອນໄດ້ເຮັດທີ່ຜ່ານມາຄື: ການຈົ່ມວ່າຕໍ່ພຣະເຈົ້າ ແລະ ຄິດວ່າພຣະອົງຊົງນຳພວກເຂົາມາໃຫ້ພົບກັບສິ່ງເຫລົ່ານີ້ (ຢຊ. 7:7).

ຢ່າງໃດກໍ່ຕາມ ຈິດວິນຍານຂອງໂຢຊວຍກໍ່ຍັງມີຄວາມແຕກຕ່າງຈາກຄົນອື່ນໆຢູ່. ເພາະວ່າການຈົ່ມວ່າຂອງລາວບໍ່ໄດ້ເກີດຈາກຄວາມຢ້ານກົວທີ່ຈະເສຍໄຊ ແຕ່ຢ້ານກົວທີ່ຈະເຮັດໃຫ້ພຣະນາມຂອງພຣະອົງນັ້ນ ຈະຖືກຢຽບຢ່ຳໃຫ້ເສຍກຽດໃນໝູ່ຂອງຄົນຕ່າງຊາດ, ຕ່າງເມືອງ (ຢຊ. 7:8-9).



ລາວໄດ້ເຫັນວ່າພຣະລັກສະນະຂອງພຣະເຈົ້ານັ້ນຈະຖືກຕິຄວາມໄປໃນທາງທີ່ຜິດຈາກຜູ້ທີ່ບໍ່ເຊື່ອ ໂດຍພິຈາລະນາຈາກການກະທຳຂອງປະຊາຊົນຂອງພຣະອົງ. ປະຈຸບັນນີ້ພວກເຮົາທຸກຄົນກໍ່ຍັງມີຄວາມຮັບຜິດຊອບອັນຍິ່ງໃຫຍ່ຢູ່ນັ້ນກໍ່ຄື ການຊ່ວຍກັນຮັກສາພຣະນາມຂອງພຣະອົງທ່າມກາງຄົນທີ່ບໍ່ເຊື່ອ

# ການຄົ້ນພົບຜູ້ທີ່ລ່ວງລະເມີດ

"ສະນັ້ນຈົ່ງບອກພວກເຂົາວ່າໃນມື້ອື່ນເຊົ້າ ພວກເຂົາຈະຖືກນຳອອກມາຂ້າງໜ້າເປັນເຜົ່າ. ຖ້າພຣະເຈົ້າຢາເວ ຄັດເອົາເຜົ່າໃດແລ້ວ ໃຫ້ຄົນໃນເຜົ່ານັ້ນເຂົ້າມາເປັນຕະກຸນ. ຖ້າພຣະເຈົ້າຢາເວຄັດເອົາຕະກຸນໃດແລ້ວ ໃຫ້ຄົນໃນຕະກຸນນັ້ນເຂົ້າມາເປັນຄອບຄົວ. ຖ້າພຣະເຈົ້າຢາເວຄັດເອົາຄອບຄົວໃດແລ້ວ ໃຫ້ຄົນນັ້ນໃນຄອບຄົວ ອອກມາຂ້າງໜ້າເທື່ອລະຄົນ (ຢຊ 7:14)



ເພື່ອກຳຈັດຄວາມບາບຂອງມະນຸດຊາດ (ຄວາມຜິດຂອງຄົນທັງໝົດ), ຄົນບາບຕ້ອງຖືກກຳຈັດ (ຢຊ. 7:15). ຖືກກຳຈັດຊັ້ນບໍ່? ລາວຈະໄດ້ຮັບການໃຫ້ອະໄພບໍ່ ຖ້າລາວກັບໃຈ? ແນ່ນອນ ວ່າໄດ້ຮັບ! ແຕ່ວ່າ ທ.ອາການ ບໍ່ໄດ້ສະແດງສັນຍາລັກໃດໆເພື່ອບອກວ່າຈະກັບໃຈ (ທັງໆທີ່ລາວມີຫລາຍໆໂອກາດ ແຕ່ລາວກໍ່ບໍ່ໄດ້ສະແດງທ່າທີ່ວ່າຈະກັບໃຈເລີຍ).

- ໄດ້ມີການປະກາດ ແລະ ເລື່ອນວັນພິຈາລະນາການສືບສວນອອກໄປເປັນມື້ຕໍ່ໄປ (ຢຊ. 7:14-15) — ທ. ອາການ ງຽບ
- ເຜົ່າຂອງເຜົ່າຢູດາເປັນຜູ້ຖືກເລືອກ (ຢຊ. 7:16) — ທ. ອາການ ງຽບ
- ຕະກຸນເຊຣາໄດ້ຖືກເລືອກ (ຢຊ. 7:17a) — ທ. ອາການ ງຽບ
- ຄອບຄົວຊັບດີໄດ້ຖືກເລືອກເປັນຫົວໜ້າ (ຢຊ. 7:17b) — ທ. ອາການ ງຽບ
- ທ. ອາການ ໄດ້ຖືກເລືອກ (ຢຊ. 7:18) — ທ. ອາການ ງຽບ



ໂຢຊວຍໄດ້ສະແດງເຖິງຄວາມມີເມດຕາ ແລະ ຄວາມຮັກຂອງພຣະເຈົ້າ, ຈຶ່ງໄດ້ຂໍແບບສຸພາບ ເພື່ອ ໃຫ້ ທ.ອາການ ນັ້ນສາລະພາບບາບຂອງລາວ(ຢຊ. 7:19).

ຄະດີຂອງທ.ອາການນັ້ນ ເຮັດໃຫ້ລາວຜ່າຍແພ້ . ລາວໄດ້ສາລະພາບບາບ ແຕ່ບໍ່ໄດ້ຂໍການອະໄພໂທດ (ຢຊ. 7:20). ແຕ່ພຣະເຈົ້າຍັງຄົງໂສກເສົ້າຕໍ່ການໃຈແຂງກະດ້າງຂອງລາວ.



# ຄວາມບາບຂອງ ທ.ອາການ

"ໃນຈຳນວນສິ່ງຂອງທີ່ພວກເຮົາຍຶດມາໄດ້ນັ້ນ ຂ້ານ້ອຍໄດ້ເຫັນເສື້ອຄຸມງາມໂຕໜຶ່ງຂອງຊາວບາບີໂລນ ແລະ ເງິນໜັກປະມານສອງກິໂລກຣາມ ແລະ ຄຳແທ່ງໜຶ່ງໜັກກວ່າເຄິ່ງກິໂລກຣາມ. ຂ້ານ້ອຍຢາກໄດ້ສິ່ງເຫລົ່ານັ້ນຫລາຍ ເລີຍໄດ້ເຊື່ອງເອົາໄວ້ ທ່ານຈະພົບສິ່ງເຫລົ່ານັ້ນຝັງໄວ້ຢູ່ໃຕ້ພື້ນດິນໃນຜ້າເຕັນຂອງຂ້ານ້ອຍ ສ່ວນເງິນແມ່ນຢູ່ກ້ອງລຸ່ມນັ້ນ" (ຢຊ 7:21)

ໂຢຊວຍໄດ້ຂໍໃຫ້ ທ.ອາການຖວາຍກຽດແດ່ພຣະເຈົ້າ ແລະ ສາລະພາບບາບຂອງລາວ (ຢຊ. 7:19). ເຊິ່ງມັນເປັນໂອກາດສຸດທ້າຍຂອງລາວ. ຖ້າວ່າລາວສາລະພາບບາບ ລາວຈະໄດ້ຮັບການໃຫ້ອະໄພ... ແຕ່ລາວບໍ່ໄດ້ເຮັດ ຈຶ່ງບໍ່ມີການໃຫ້ອະໄພສຳລັບລາວ (ຈຊບຊ. 15:30-31).

ເຊັ່ນດຽວກັນກັບ ເອວາ. ທ.ອາການ "ໄດ້ເຫັນ" "ໄດ້ມີຄວາມປາຖະໜາ," ແລະ "ໄດ້ເອົາ" ແລະຄວາມບາບທີ່ລາວເຮັດ ກໍ່ໄດ້ກະທົບຕໍ່ຄົນທັງໝົດ (ປຖມກ. 3:6). ເຊັ່ນດຽວກັນກັບອານານີຢ ແລະເມຍຂອງລາວ ຊາຟີຣາ, ທ.ອາການໄດ້ເອົາສິ່ງຂອງບາງຢ່າງທີ່ຖືກພຣະເຈົ້າສາບແຊ່ງ ແລະ ລາວຕ້ອງໄດ້ຈ່າຍລາຄາຂອງຄວາມບາບນັ້ນ(ກຈກ 5:1-2).







ການຕັດສິນໃຈຂອງ ທ. ອາການ ນັ້ນ, ແຕກຕ່າງຈາກການຕັດສິນໃຈຂອງນາງຣາຮາບຢ່າງຊັດເຈນ:

| ນ.ຣາຮາບ | ທ.ອາການ |
| --- | --- |
| ເຊື່ອງນັກສືບໄວ້ເທິງຫລັງຄາ | ເຊື່ອງສິ່ງຂອງໄວ້ໃຕ້ດິນ |
| ສະແດງຄວາມໃຈດີຕໍ່ຊາວອິດສະຣາເອນ | ນຳບັນຫາມາສູ່ອິດສະຣາເອນ |
| ໄດ້ຮັບໄຊຊະນະຍ້ອນຄວາມເຊື່ອ | ສິ່ງທີ່ລາວເຮັດ ເຮັດໃຫ້ອິດສະຣາເອນຝ່າຍແພ້ |
| ເຮັດພັນທະສັນຍາກັບອິດສະຣາເອນ | ທຳລາຍພັນທະສັນຍາຂອງຊາວອິດສະຣາເອນ |
| ສາມາດຊ່ວຍຊີວິດຂອງຕົນເອງ ແລະ ຄອບຄົວ | ເສຍຊີວິດພ້ອມກັບຄອບຄົວ |

# ໄດ້ຮັບໄຊຊະນະອີກຄັ້ງ

"ພຣະເຈົ້າຢາເວໄດ້ສັ່ງໂຢຊວຍວ່າ, ຈົ່ງນຳເອົາທະຫານທັງໝົດຂຶ້ນໄປສູ່ເມືອງອາອີ. ຢ່າຢ້ານຫລືທໍ້ຖອຍໃຈເລີຍ. ເຮົາຈະໃຫ້ເຈົ້າຮັບຊະນະກະສັດແຫ່ງອາອີ, ປະຊາຊົນ, ເມືອງ, ຕະຫລອດທັງດິນແດນຂອງລາວດ້ວຍ" (ຢຊ 8:1)



ເຊັ່ນດຽວກັນກັບໃນເມືອງເຢຣິໂກ, ພຣະເຈົ້າໄດ້ໃຫ້ກົນລະຍຸດແກ່ໂຢຊວຍເພື່ອທີ່ຈະເອົາຊະນະເມືອງ ອາອີໄດ້ (ຢຊ. 8:1-2).



ໃນຕອນກາງຄືນ, ໄດ້ມີການຕັ້ງຊຸ້ມໂຈມຕີໄວ້ທີ່ດ້ານຫລັງເມືອງ. ພໍຕາເວັນເລີ່ມຂຶ້ນ, ພວກກອງທັບກໍ່ໄດ້ເຂົ້າມາໃກ້ເມືອງ ອາອີ, ແລະ ໄດ້ທຳທ່າໜີຈາກເມືອງພວກເຂົາໄປ ແຕ່ແທ້ຈິງແລ້ວມີການກຽມໂຈມຕີທາງດ້ານຫລັງ. ຢຊ 8:14-15

ເຊັ່ນດຽວກັນກັບທີ່ໂມເຊໄດ້ຍົກໄມ້ຄ້ອນທ້າວຂອງລາວຂຶ້ນຕາມທີ່ພຣະເຈົ້າໄດ້ສັ່ງຈົນເອົາຊະນະຊາວອາມາເລັກໄດ້, ໂຢຊວຍກໍ່ໄດ້ຍົກ "ອາວຸດຂອງລາວຂຶ້ນ" (ອາດຈະເປັນດາບຄ້າຍໆກ່ຽວ ແບບດຽວກັນກັບທີ່ຊາວເອຢິບນຳໃຊ້), ແລະໄດ້ຍົກດາບນັ້ນຂຶ້ນເລື້ອຍໆຈົນໄດ້ຮັບໄຊຊະນະຢ່າງສົມບູນ (ຢຊ. 8:18-22, 26).



ພຣະເຈົ້າຊົງປະທານໄຊຊະນະໃຫ້ແກ່ປະຊາຊົນຂອງພຣະອົງອີກຄັ້ງ. ຮ່ອມພູ ລຳບາກ (Achor) ບ່ອນທີ່ ທ.ອາການ ແລະ ຄອບຄົວຂອງລາວຖືກປະຫານຊີວິດ, ໄດ້ເປັນການເປີດປະຕູແຫ່ງໄຊຊະນະໃຫ້ແກ່ປະຊາຊົນຂອງພຣະອົງ" (ຮສອ 2:15).

ເມື່ອພວກເຮົາໄດ້ຍອມຮັບເອົາການອະໄພຍະໂທດຈາກພຣະເຈົ້າດ້ວຍຄວາມເຊື່ອ, ພຣະເຈົ້າຈະຝັງບາບຂອງເຮົາໄວ້ທີ່ Achor ຮ່ອມພູລຳບາກ, ແລະ ເປີດປະຕູສູ່ຄວາມຫວັງ

"ອິດທິພົນທີ່ຄຣິດຕະຈັກຢ້ານກົວຫລາຍທີ່ສຸດ ບໍ່ແມ່ນອິດທິພົນມາຈາກການຕໍ່ຕ້ານຢ່າງເປີດເຜີຍ, ຄົນນອກສາສະໜາ ແລະ ຜູ້ໝິ່ນປະໝາດພຣະເຈົ້າ, ແຕ່ແມ່ນຜູ້ທີ່ສອນພຣະຄຳພີໂດຍບໍ່ສອດຄ້ອງກັບຄວາມເປັນຈິງໃນພຣະຄຳພີ. ຄົນເຫລົ່ານີ້ແມ່ນຜູ້ທີ່ປິດກັ້ນພຣະພອນຂອງພຣະເຈົ້າ ແລະ ນຳຄວາມອ່ອນແອມາສູ່ຄຣິດຕະຈັກ, ເຊິ່ງເປັນຄຳໝິ່ນປະໝາດທີ່ລົບລ້າງໄດ້ຍາກ... ສາສະໜາຄຣິດບໍ່ໄດ້ຖືກນຳມາໃຫ້ປະກົດສະເພາະໃນວັນສະບາໂຕ ແລະ ສະແດງໃນບ່ອນນະມັດສະການເທົ່ານັ້ນ, ແຕ່ມີໄວ້ສຳລັບທຸກໆມື້ໃນອາທິດ. ຫລັກຄຳສອນຂອງພຣະເຈົ້າໃນພຣະຄຳພີຈຳເປັນຕ້ອງຍອມຮັບ ແລະ ປະຕິບັດຕາມໃນບ່ອນເຮັດວຽກ, ຢູ່ບ້ານ, ແລະ ໃນທຸກໆບ່ອນທົ່ວໂລກ..."

EGW (Conflict and Courage, April 23)